

## ບົດຮຽນທີ່ຖອດຖອນໄດ້ກ່ຽວກັບການປູກຫຍ້າເພື່ອລ້ຽງສັດຢູ່ເມືອງແປກ ແຂວງຊຽງຂວາງ

ສະບາຍດີ ທ່ານຜູ້ອ່ານ ທັງຫຼາຍ ຂ້າພະເຈົ້າຊື່ ທ້າວສີຈັນ ເປັນ ຫົວໜ້າກຸ່ມລ້ຽງງົວຢູ່ບ້ານສາມຕົ້ນເມືອງວຽງຄຳ ແຂວງຫລວງພະບາງຂ້າພະເຈົ້າຈະເລົ່າສູ່ບັນດາທ່ານກ່ຽວກັບການໄປທັດສະນະເບິ່ງການປູກຫຍ້າຢູ່ບ້ານນາລາມ ແລະ ບ້ານໂພນທອງ ເມືອງແປກ ແຂວງຊຽງຂວາງ ໃນມື້ ວັນທີ່ 20-24ເດືອນ 11 ປີ 2006 ທາງໂຄງການຄຸ້ມຄອງປ່າໄມ້ ແລະສົ່ງເສີມຊາວບ້ານ (FORCOM) ໄດ້ນຳພາ ຊາວບ້ານຂອງພວກເຮົາໄປທັດສະນະເບິ່ງການປູກຫຍ້າເພື່ອລ້ຽງສັດໃຫຍ່.ໃນການໄປທັດສະນະໃນຄັ້ງນີ້ໄປນຳກັນມີຢູ່ 3 ບ້ານ ຄື: ບ້ານສາມຕົ້ນຂອງພວກຂ້າພະເຈົ້າ ແລະ ບ້ານນ້ຳຊາດ, ບ້ານກໍ້ກ້ຽງເມືອງວຽງທອງ ແຂວງຫົວພັນ ລວມຊາວບ້ານທີ່ໄປນຳກັນມີປະມານ 18 ຄົນ.



ວິທີການປູກຫຍ້າຂອງເຂົາເຈົ້າແມ່ນປູກດ້ວຍແກ່ນ ແລະປູກດ້ວຍເຫົ້ງາແນວພັນຫຍ້າທີ່ນຳມາປູກມີຄື: ຫຍ້າກິນນີ,ຫຍ້າໂມລາໂຕ ຫຍ້າຖົ່ວສະຕາໂລ.

☛ ຜົນດີຂອງການປູກຫຍ້າມີຄື:
- ມີຫຍ້າໃຫ້ສັດກິນຕະຫລອດປີ
- ສັດລ້ຽງຈະໃຫຍ່ໄວ ແລະ ຕູ້ຍດີ
- ບໍ່ເສັຍເວລາໃນການໄປຊອກຕັດຫຍ້າມາໃຫ້ສັດ
- ມີເວລາໄປເຮັດວຽກແນວອື່ນ

ສະນັ້ນຂ້າພະເຈົ້າເອງຈະນຳເອົາບົດຮຽນດັ່ງກ່າວນັ້ນເພື່ອມາຜັນຂະຫຍາຍຢູ່ພາຍໃນບ້ານຂອງພວກເຮົາໃຫ້ໄດ້ຮັບຜົນໃນອານາຄົດ. ຂໍຂອບໃຈນຳທ່ານຜູ້ອ່ານຫລາຍໆ



## ບົດຮຽນກ່ຽວກັບວຽກງານສັດຕະວະແພດຂັ້ນບ້ານ

ຂ້າພະເຈົ້າເອງຊື່ວ່າ ທ້າວອ່ອນຈັນ ເປັນນາຍບ້ານຂອງບ້ານດອນແກ້ວ ເມືອງຜາອຸດົມແຂວງບໍ່ແກ້ວບ້ານຂອງພວກເຮົາກໍ່ແມ່ນບ້ານໜຶ່ງທີ່ໄດ້ຮັບການສະນັບສະໜູນຈາກໂຄງການຄຸ້ມຄອງປ່າໄມ້ ແລະ ສົ່ງເສີມຊາວບ້ານ (ຟໍຄອມ) ຂ້າພະເຈົ້າເອງຢາກຈະມາເວົ້າກ່ຽວກັບວຽກງານສັດຕະວະແພດຂັ້ນບ້ານສູ່ບັນດາທ່ານຟັງ.ທາງບ້ານຂອງພວກ ເຮົາໄດ້ຮັບການຊຸກຍູ້ສົ່ງເສີມຈາກໂຄງການມີ:5ກິດຈະກຳຄື:ກິດຈະກຳລ້ຽງໝູ,ລ້ຽງງົວ,ລ້ຽງໄກ່,ປູກໄມ້ລວມບ້ານ ແລະ ກິດຈະກຳສ້າງປ່າປ້ອງກັນແຫລ່ງນ້ຳ. ຫລັງຈາກທາງບ້ານຂອງພວກເຮົາໄດ້ຈັດຕັ້ງປະຕິບັດມາໄດ້ໄລຍະໜຶ່ງເຫັນວ່າມີບັນຫາເປັນຕົ້ນແມ່ນໝູນ້ອຍທີ່ເກີດມາໃໝ່ແມ່ນຕາຍໝົດທາງບ້ານ ຂອງ ພວກເຮົາໄດ້ມາປຶກສານຳ ພະນັກງານເມືອງແຂວງແລະທີມງານຂອງໂຄງການໄດ້ແນະນຳໃຫ້ສ້າງຕັ້ງກຸ່ມສັດຕະວະແພດຂັ້ນບ້ານຂຶ້ນໃນເດືອນ9/2006ໂດຍໄດ້ຄັດເລືອກເອົາມາຈາກແຕ່ລະກຸ່ມກິດຈະກຳແລະຫລັງຈາກນັ້ນທາງທີມງານຂອງເມືອງແຂວງໂຄງການໄດ້ມາຝຶກອົບຮົມວິທີການສັກຢາສັດແລະປິ່ນປົວສັດໃຫ້ທາງກຸ່ມຂອງ



ພວກເຮົາ.ມາຮອດປະຈຸບັນທາງກຸ່ມສັດຕະວະແພດຂອງພວກເຮົາສາມາດສັກຢາປ້ອງກັນ,ຂ້າແມ່ທ້ອງໃຫ້ສັດແລະປິ່ນປົວສັດດູແລຮັກສາໝູນ້ອຍເກີດມາໃຫ່ມດ້ວຍຕັດແຂ້ວ,ໃຫ້ອາຫານໝູນອ້ຍ ຄືຕົ້ມເຂົ້າປຽນປົນຮຳ,ມັນຕົ້ນສັກຢາທາດເຫຼັກຈຶ່ງເຮັດໃຫ້ໝູນ້ອຍບໍ່ຕາຍຄືກັນກັບໃນເມື່ອແຕ່ກ່ອນ.ໃນເບື້ອງຕົ້ນທາງໂຄງການໄດ້ສະໜອງອຸປະກອນແລະຢາຈຳນວນໜຶ່ງຕີກເປັນເງິນປະມານ100.000ກີບມາຮອດປະຈຸບັນທາງກຸ່ມຂອງພວກເຮົາສາມາດເກັບເງິນເຂົ້າກອງທຶນໝູນວຽນຢາໄດ້ຈຳນວນ300.000ກີບດັ່ງນັ້ນຂ້າພະເຈົ້າຫວັງວ່າຊາວກະສິກອນຜູ້ລ້ຽງສັດທັງຫລາຍຈົ່ງນຳເອົາບົດຮຽນດັ່ງກ່າວນີ້ໄປໝູນໃຊ້ ( ຂໍຂອບໃຈຫລາຍໆນຳທ່ານຜູ້ທີ່ສົນໃຈອ່ານ)



## ການສ້າງລາຍຮັບຈາກການລ້ຽງໄກ່

ຂ້າພະເຈົ້າຊື່ : ທ້າວພວງ ອາຍຸ 45 ປີອາຊີບເຮັດນາຢູ່ບ້ານໂພນທອນ ເມືອງ ເຟືອງ ແຂວງວຽງຈັນ ຊະມາຊິກກຸ່ມລ້ຽງໄກພາຍໃນກຸ່ມຂອງຂ້າພະ ເຈົ້າມີ 9 ຄອບຄົວ,ເວົ້າສະເພາະແຕຄອບຄົວຂ້າພະເອງເຈົ້າແມ່ນໄດ້ຮັບທຶນຊ່ວຍເຫຼືອຈາກໂຄງການ ຟໍຄອມ ໃນເດືອນ 3 / 2006 ເປັນຈຳນວນເງິນ 400.000 ກີບ ເປັນໄກ່ 20 ໂຕແມ່ 15 ໂຕ ຜູ້ 5 ໂຕ ການ ລ້ຽງໄກ່ຂອງຂ້າພະເຈົ້າແມ່ນລ້ຽງຕາມເຕັກນິກ ທີ່ທາງວິຊາການເມືອງໄດ້ຝຶກອົບຮົມໃຫ້ຄື : ເຕັກນິກການຄັດເລືອກສະຖານທີ່ການສ້າງຄອກ,ການເລືອກພໍ່ແມ່ພັນ,ການໃຫ້ອາຫານ,ການບົວລະບັດຮັກສາ ແລະ ການສັກຢາປ້ອງກັນພະຍາດສັດມາຮອດປະຈຸບັນນີ້ຂ້າພະເຈົ້າໄດ້ຂາຍໄກ່ອອກຈຳນວນ 60ໂຕໂຕ ລະ 20,000 ກີບ ເປັນເງິນ 1,200,000 ກີບ ຄາດວາໃນເດືອນ 3 / 2007ຈະຂາຍໄກ່ອອກຈຳນວນ 30 ໂຕໆ ລະ 25,000ກີບ ເປັນເງິນ 750,000 ກີບ ຂ້າພະເຈົ້າສາມາດສ້າງລາຍຮັບໃຫ້ແກ່ຄອບຄົວໃນ1ປີຈຳນວນ 1,950,000ກີບ, ກຳນົດການໝູນວຽນທຶນແມ່ນປີແລ້ວຂ້າພະເຈົ້າຈະສົ່ງທຶນຄືນໃຫ້ແກ່ ຄອບຄົວອື່ນໃນເດືອນ 3 ປີ 2007ພອ້ມກັບດອກເບັ້ຍ 2% ຕໍ່ປີເປັນ ເຂົ້າກອງທຶນຂອງ ບ້ານທັງຈາກສິ້ນສຸດຂອງການສົ່ງທຶນຄືນໃຫ້ແກ່ຄອບຄົວອື່ນໝົດລ້ວ ຂ້າພະຈະ ເຈົ້າສືບຕໍ່ໃນການລ້ຽງໄກ່ຕະຫອດໄປ ເພື່ອແກ້ໄຂຊີວິດການເປັນຢູ່ຂອງຄອບຄົວໃຫ້ດີຂຶ້ນເລື້ອຍໆ.



ຂໍຂອບໃຈນຳທ່ານຜູ້ອ່ານຫລາຍໆ

☺ ຫົວຂໍ້ຈົດໝາຍຂ່າວ

☺ ບົດຮຽນທີ່ຖອດຖອນໄດ້ກ່ຽວກັບການປູກຫຍ້າເພື່ອລ້ຽງສັດຢູ່ເມືອງແປກແຂວງຊຽງຂວາງ

☺ ບົດຮຽນກ່ຽວກັບສັດຕະວະແພດຂັ້ນບ້ານຢູ່ບ້ານດອນແກ້ວເມືອງຜາອຸດົມແຂວງບໍ່ແກ້ວ

☺ ການສ້າງລາຍຮັບຈາກການລ້ຽງໄກ່ຢູ່ບ້ານໂພນທອນເມືອງເຟືອງແຂວງວຽງຈັນ






ຊາວບ້ານກຳລັງສັກຢາປ້ອງກັນໃຫ້ສັດລ້ຽງຂອງເຂົາເຈົ້າ





# ບົດຮຽນຂອງຊາວບ້ານ


ສະບັບເດືອນ 11 ປີ 2006

No: 11


ແຜນທີ່ 6 ແຂວງ ເປົ້າໝາຍຂອງໂຄງການ
N